## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 18 ທັນວາ 2022 (12-18-2022)

---

## ຄວາມຮັກແທນຄວາມຢ້ານກົວ

*ແມ່ນຫຍັງເຮັດໃຫ້ທ່ານມີຄວາມຮູ້ສຶກພໍໃຈຢ່າງແຮງ?*

**ຈຸດສຳຄັນໃນບົດຮຽນ:** ມັນບໍ່ມີຫ້ອງສຳລັບຄວາມຢ້ານກົວເມື່ອຄວາມຮັກຂອງພຣະເຈົ້າຢູ່ໃນເຮົາ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ນຶ່ງໃນວັນພັກທີ່ຂ້າພະເຈົ້າມັກແມ່ນວັນຂອບພຣະຄຸນພຣະເຈົ້າ. ແມ່ນແລ້ວຂ້າພະເຈົ້າໃຊ້ເວລາທີ່ຈະສະທ້ອນພຣະພອນຂອງພຣະເຈົ້າທັງໝົດ, ແຕ່ຂ້າພະເຈົ້າຮັກວັນຂອບພຣະຄຸນສຳລັບເຫດຜົນທີສອງ: ອາຫານ! ວັນຂອບພຣະຄຸນແມ່ນມື້ທີ່ຂ້າພະເຈົ້າໄດ້ຕັ້ງຄວາມຄິດລະວັງອາຫານປະເພດແປ້ງແລະແຄລໍຣີ. ຂ້າພະເຈົ້າເລີ້ມຕົ້ນໃນວັນພັກດ້ວຍອາຫານໂປດທີ່ສຸດຄືໄສ້ກອກມົນ; ຕໍ່ຈາກນັ້ນຂ້າພະເຈົ້າກໍຕຽມຕົວສູ່ເຂົ້າທ່ຽງດ້ວຍເຄື່ອງປະກອບຕ່າງໆທີ່ຈຳເປັນ. ສຸດທ້າຍ, ຂ້າພະເຈົ້າຈົບມື້ພັກດ້ວຍອາຫານຄ່ຳໃນຈານຂນາດນ້ອຍກວ່າໜ້ອຍນຶ່ງ. ສະເລັ່ຽຄົນນຶ່ງກິນອາຫານຫຼາຍກວ່າສາມພັນແຄລໍຣີໃນວັນຂອບພຣະຄຸນ, ແລະຂ້າພະເຈົ້າກໍເຊື່ອມັນຢ່າງນັ້ນ!

ຖ້າເປັນພີ່ນ້ອງທີ່ໃກ້ຊິດມາຊວນໃຫ້ຂ້າພະເຈົ້າໄປຮ້ານອາຫານ ທາໂກແບວ ຄືນນັ້ນ, ຂ້າພະເຈົ້າແນ່ນອນໄດ້ວ່າຕ້ອງໄດ້ປະຕິເສດ. ເຫດຜົນແມ່ນງ່າຍໆ-ແລະຊັດເຈນ-ຂ້າພະເຈົ້າອີ່ມ. ຂ້າພະເຈົ້າບໍ່ມີບ່ອນຫວ່າງສຳລັບອັນອື່ນອີກແລ້ວ. ຄວາມຈິງນີ້ບໍ່ພຽງແຕ່ເປັນຈິງສຳລັບການເດີນທາງ; ມັນແມ່ນຄວາມຈິງເມື່ອພວກເຮົາເວົ້າເຖິງຄວາມສັມພັນກັບພຣະເຈົ້າ. ເມື່ອໃດພວກເຮົາອີ່ມເອີບໄປດ້ວຍຄວາມຈິງແລະຄວາມຮັກຂອງພຣະເຈົ້າ, ມັນບໍ່ມີຫ້ອງສຳລັບຄວາມຢ້ານກົວ. ພວກເຮົາຈະເຫັນອັນນີ້ໃນ 1 ໂຢຮັນ. ເມື່ອພວກເຮົາດຳເນີນຊີວິດທີ່ເຕັມໄປດ້ວຍຄວາມຮັກຂອງພຣະເຈົ້າ, ພວກເຮົາສາມາດພັກຜ່ອນໃນຜູ້ທີ່ພຣະອົງຊົງເປັນແລະເດີນຕາມຢ່າງໝັ້ນໃຈ-ໂດຍບໍ່ຢ້ານກົວ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>1 ໂຢຮັນ 3:13-18</u>

*13. ພີ່ນ້ອງທັງຫຼາຍເອີຍ, ຖ້າໂລກນີ້ກຽດຊັງພວກເຈົ້າຢ່າປລາດໃຈ. 14. ຝ່າຍເຮົາທັງຫຼາຍຮູ້ແລ້ວວ່າ ພວກເຮົາໄດ້ຍ້າຍອອກຈາກ*
*ຄວາມຕາຍເຂົ້າສູ່ຊີວິດແລ້ວ ກໍເພາະພວກເຮົາຮັກພີ່ນ້ອງ ຜູ້ໃດທີ່ບໍ່ຮັກ ຜູ້ນັ້ນກໍຍັງຢູ່ໃນຄວາມຕາຍ. 15. ຜູ້ໃດທີ່ກຽດຊັງພີ່ນ້ອງຂອງຕົນ*
*ກໍເປັນຜູ້ຂ້າຄົນ ແລະເຈົ້າທັງຫຼາຍຮູ້ແລ້ວວ່າ ຜູ້ຂ້າຄົນບໍ່ມີຊີວິດອັນຕລອດໄປເປັນນິດຕັ້ງຢູ່ໃນຕົນຈັກຄົນ. 16. ດັ່ງນີ້ແຫຼະ, ເຮົາທັງຫຼາຍ*
*ຈຶ່ງຮູ້ຈັກຄວາມຮັກ ໂດຍທີ່ພຣະຄຣິດໄດ້ຊົງຍອມສລະພຣະຊົນຂອງພຣະອົງເພື່ອເຮົາທັງຫຼາຍ ຝ່າຍພວກເຮົາຄວນຈະສລະຊີວິດຂອງ*
*ພວກເຮົາເພື່ອພີ່ນ້ອງເໝືອນກັນ. 17. ແຕ່ຖ້າຜູ້ໃດມີຊັບສົມບັດໃນໂລກນີ້ ແລະເຫັນພີ່ນ້ອງຂອງຕົນຂັດສົນ ແລະຍັງບໍ່ຍອມມີໃຈເມດຕາ*
*ຊ່ອຍເຫຼືອຜູ້ນັ້ນ ຄວາມຮັກຕໍ່ພຣະເຈົ້າຈະດຳຣົງຢູ່ໃນຕົນໄດ້ຢ່າງໃດ? 18. ລູກນ້ອຍທັງຫຼາຍເອີຍ, ຢ່າໃຫ້ເຮົາຮັກດ້ວຍຄວາມເວົ້າ ແລະ*
*ດ້ວຍປາກເທົ່ານັ້ນ ແຕ່ຈົ່ງສະແດງຄວາມຮັກອັນແທ້ຈິງດ້ວຍການກະທຳ.*

ອັຄສາວົກໂຢຮັນຂຽນຈົດໝາຍສັ້ນນີ້ອາດຈະມາຈາກເມືອງເອເຟໂຊ. ໃນນັ້ນ, ທ່ານສຸມໃສ່ຄວາມກົມກຽວແລະຄວາມໃກ້ຊິດຂອງພວກເຮົາກັບພຣະເຢຊູ. ຄວາມຮັກເປັນສູນກາງຂອງຄວາມຈິງໃນຊີວິດຂອງໂຢຮັນແລະການສິດສອນ, ແລະໃນຂ່າວປະເສີດທີ່ທ່ານໄດ້ຂຽນ, ເຖິງແມ່ນທ່ານຈະເອີ້ນຕົນເອງວ່າເປັນ “ຜູ້ທີ່ພຣະເຢຊູຊົງຮັກ.” (ໂຢຮັນ 13:23) ນີ້ບໍ່ແມ່ນປໂຍກຍ້ອງຍໍຕົວເອງ, ແຕ່ມັນສະທ້ອນເຖິງບ່ອນທີ່ທ່ານໄດ້ພົບຄວາມປອດພັຍ. ຄວາມປອດພັຍແມ່ນພົບເຫັນຢູ່ໃນຜູ້ທີ່ຮັກເຮົາ, ແລະຜູ້ທີ່ຮັກໂຢຮັນແມ່ນກະສັດແຫ່ງຈັກກະວານ.

ໃນຂໍ້ນີ້, ໂຢຮັນໄດ້ໃຫ້ພາບທີ່ຊັດເຈນຂອງສິ່ງທີ່ມັນຄ້າຍຄືໃນເວລາທີ່ພວກເຮົາອາສັຍຢູ່ໃນຄວາມຮັກຂອງພຣະເຢຊູແລະສະແດງໃຫ້ເຫັນມັນກັບຄົນອື່ນ. ກ່ອນໜ້ານີ້ໃນຂໍ້ 12, ເພິ່ນໄດ້ເຕືອນພວກເຮົາເຖິງຄຳສັ່ງທີ່ເພິ່ນໄດ້ຍິນຈາກພຣະເຢຊູ: ຈົ່ງຮັກຊຶ່ງກັນແລະກັນ. (ເບິ່ງໂຢຮັນ 13:34-35). ເມື່ອເຮົາຮັກຄືກັບພຣະເຢຊູ ເຮົາຍັງຈະປະສົບກັບຄວາມກຽດຊັງຂອງໂລກຄືກັນກັບພຣະເຢຊູໄດ້ພົບ.

ທ່ານເປັນສ່ວນຕົວແນວໃດປະສົບກັບຄວາມຮັກຂອງພຣະເຈົ້າເຮັດວຽກຜ່ານຄົນອື່ນ?

ບາງຄົນອາດຈະສົງສັຍວ່າເປັນຫຍັງຄົນເຮົາຈຶ່ງຕໍ່ຕ້ານກັບການສະແດງຄວາມຮັກ, ໂດຍສະເພາະຄວາມຮັກທີ່ບໍ່ມີເງື່ອນໄຂທີ່ຮັກຕໍ່ສ່ວນບຸກຄົນບໍ່ວ່າມີຫຍັງເກີດຂຶ້ນກໍຕາມ. ແສງສວ່າງຂອງຄວາມຮັກດັ່ງກ່າວເປີດເຜີຍຄວາມມືດຂອງໂລກທີ່ບໍ່ຮັກ.

ເໝືອນດັ່ງແມງສາບທີ່ກະແຈກກະຈາຍເມື່ອມີແສງສວ່າງຖືກເປີດ, ຈົ່ງດຳເນີນຊີວິດເໝືອນ "ບຸດຂອງຄວາມສວ່າງ" (ເອເຟໂຊ 5:8) ເປີດເຜີຍໃຫ້ຄົນອື່ນສາມາດເຫັນຄວາມບາບ. ໂຢຮັນໄດ້ບອກຜູ້ອ່ານຂອງທ່ານວ່າ: “ອັນນີ້ເປັນສິ່ງຊັດເຈນວ່າໃຜເປັນບຸດຂອງພຣະເຈົ້າແລະໃຜເປັນລູກຂອງມານ. ຜູ້ໃດບໍ່ເຮັດສິ່ງທີ່ຖືກຕ້ອງບໍ່ແມ່ນຂອງພຣະເຈົ້າ, ໂດຍສະເພາະຜູ້ທີ່ບໍ່ໄດ້ຮັກພີ່ນ້ອງຂອງຕົນ” (1 ໂຢຮັນ 3:10) ເມື່ອພວກເຮົາຮັກຄືກັບພຣະເຢຊູ, ພວກເຮົາຈະຖືກຕໍ່ຕ້ານ.

ປະຕິກິລິຍາທາງລົບຂອງໂລກຕໍ່ຄວາມຮັກຂອງພວກເຮົາແລະຊີວິດໃນພຣະຄຣິດບໍ່ຄວນຂັດຂວາງພວກເຮົາໃນການສະແດງຄວາມຮັກ. ຖ້າຄວາມຮັກນີ້ຢູ່ໃນໃຈຂອງພວກເຮົາ, ບໍ່ແມ່ນພຽງແຕ່ພວກເຮົາຈະບໍ່ລັ່ງເລໃນການສະແດງຄວາມຮັກ "ໃນການກະທຳແລະຄວາມຈິງ," ແຕ່ພວກເຮົາຈະ "ສລະຊີວິດຂອງພວກເຮົາເພື່ອອ້າຍເອື້ອຍນ້ອງຂອງພວກເຮົາ." ຄວາມຮັກຂອງພຣະຄຣິດນຳພາພວກເຮົາໄປແລະເຮັດເຊັ່ນດຽວກັນ. ຄວາມຮັກທີ່ບໍ່ເຫັນແກ່ຕົວ ແລະເສັຽສລະດັ່ງກ່າວຈະເຮັດໃຫ້ເກີດຄວາມກົດດັນແລະການສຽດສີກັບໂລກ, ແຕ່ພວກເຮົາຍັງຖືກເອີ້ນໃຫ້ຮັກ.

## 2. <u>1 ໂຢຮັນ 4:14-16</u>

*14. ຝ່າຍເຮົາທັງຫຼາຍໄດ້ເຫັນແລະເປັນພຍານວ່າ ພຣະບິດາໄດ້ຊົງໃຊ້ພຣະບຸດມາເປັນຜູ້ໂຜດມະນຸສໂລກໃຫ້ລອດພົ້ນ. 15. ຜູ້ໃດຍອມຮັບວ່າພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າ ພຣະເຈົ້າກໍຊົງສະຖິດຢູ່ໃນຜູ້ນັ້ນ ແລະຜູ້ນັ້ນກໍຕັ້ງຢູ່ໃນພຣະເຈົ້າ. 16. ຝ່າຍເຮົາທັງຫຼາຍໄດ້ຮູ້ຈັກແລະໄດ້ເຊື່ອໃນຄວາມຮັກທີ່ພຣະເຈົ້າໄດ້ຊົງມີຕໍ່ພວກເຮົາ ພຣະເຈົ້າຊົງເປັນຄວາມຮັກ ຜູ້ໃດທີ່ຕັ້ງຢູ່ໃນຄວາມຮັກກໍຢູ່ໃນພຣະເຈົ້າ ແລະພຣະເຈົ້າກໍຊົງສະຖິດຢູ່ໃນຜູ້ນັ້ນ.*

ໂຢຮັນສາມາດຢືນຢັນໄດ້ໂດຍສ່ວນຕົວເຖິງຄວາມຈິງນັ້ນ “ພຣະບິດາໄດ້ສົ່ງພຣະບຸດຂອງພຣະອົງເປັນພຣະຜູ້ຊ່ອຍໃຫ້ລອດຂອງໂລກ" (14). ແຕ່ມັນບໍ່ແມ່ນພຽງແຕ່ຜູ້ເປັນພຍານເທົ່ານັ້ນທີ່ສາມາດເວົ້າແນວນັ້ນ. ດັ່ງທີ່ພຣະເຢຊູບອກໂທມາວ່າ, “ຜູ້ທີ່ບໍ່ໄດ້ເຫັນເຮົາແຕ່ໄດ້ເຊື່ອກໍເປັນສຸກ.” (ໂຢຮັນ 20:29ຂ). ດ້ວຍຄວາມເຊື່ອເຮົາກໍເຮັດໄດ້ເຊັ່ນກັນໂດຍຍອມຮັບວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ. ມັນແມ່ນການຍອມຮັບນັ້ນທີ່ນຳພວກເຮົາເຂົ້າໄປໃນຄວາມສຳພັນກັບພຣະອົງ. ໂຢຮັນຂຽນວ່າ, “ຜູ້ໃດທີ່ຕັ້ງຢູ່ໃນຄວາມຮັກກໍຢູ່ໃນພຣະເຈົ້າ ແລະພຣະເຈົ້າກໍຊົງສະຖິດຢູ່ໃນຜູ້ນັ້ນ.” (ຂໍ້ 16).

ຂນະທີ່ພຣະເຈົ້າເຂົ້າຢູ່ອາສັຍໃນຊີວິດຂອງພວກເຮົາ, ຄວາມຮັກຂອງພຣະອົງກໍເຂົ້າມາເຊັ່ນກັນ. ທັງສອງບໍ່ສາມາດແຍກຈາກກັນໄດ້. ນັ້ນກໍໝາຍຄວາມວ່າຖ້າພວກເຮົາບໍ່ໄດ້ສະແດງຄວາມຮັກເໝືອນ-ພຣະຄຣິດ, ມັນເຫັນໄດ້ຊັດເຈນວ່າຄວາມຮັກຂອງພຣະອົງບໍ່ໄດ້ສະຖິດຢູ່ໃນພວກເຮົາ. ມັນເປັນຄວາມຈິງອັນຮຸນແຮງທີ່ໂຢຮັນເວົ້າຊ້ຳຕລອດໃນຈົດໝາຍສະບັບນີ້ "ຝ່າຍເຮົາທັງຫຼາຍຮູ້ແລ້ວວ່າ ພວກເຮົາໄດ້ຍ້າຍອອກຈາກຄວາມຕາຍເຂົ້າສູ່ຊີວິດແລ້ວ ກໍເພາະພວກເຮົາຮັກພີ່ນ້ອງ ຜູ້ໃດທີ່ບໍ່ຮັກ ຜູ້ນັ້ນກໍຍັງຢູ່ໃນຄວາມຕາຍ.” (1 ໂຢຮັນ 3:14).

ກິ່ນຫອມອັນນຶ່ງທີ່ຂ້າພະເຈົ້າມັກທີ່ສຸດໃນໂລກແມ່ນກິ່ນຫອມສົດໆຄຸກກີ້ຊິບຊັອກໂກແລັດອົບ. ມັນເປັນກິ່ນຫອມທີ່ເຊື້ອເຊີນຂ້າພະເຈົ້າຊອກຫາແລະຊອກຫາແຫຼ່ງທີ່ມາຂອງມັນ. ເນື່ອງຈາກວ່າກິ່ນຫອມໄດ້ຊັກຊວນຂ້າພະເຈົ້າ, ຂ້າພະເຈົ້າຈະບໍ່ພໍໃຈຈົນກວ່າຈະຊອກ

ຫາແຫຼ່ງແລະຊີມລົດຊາດຂອງຄວາມດີຂອງມັນ. ໃນຖານະເປັນຜູ້ຕິດຕາມຂອງພຣະເຢຊູ, ພວກເຮົາຕ້ອງສົ່ງອອກກິ່ນຫອມຂອງພຣະເຢຊູແລະຄວາມຮັກຂອງພຣະບິດາ. ບ່ອນໃດກໍຕາມທີ່ພວກເຮົາໄປແລະສິ່ງໃດກໍຕາມທີ່ພວກເຮົາເຮັດ, ຄວນຈະມີກິ່ນຫອມຂອງພຣະເຢຊູອອກມາຈາກຊີວິດຂອງພວກເຮົາ. ເປັນຫຍັງ? ເນື່ອງຈາກວ່າຄວາມຮັກຂອງພຣະເຈົ້າຢູ່ໃນເຮົາແລະຍັງຄົງຢູ່ໃນພວກເຮົາ. ພວກເຮົາມີພຣະວິນຍານຂອງພຣະເຈົ້າສະຖິດຢູ່ໃນພວກເຮົາເພື່ອວ່າພວກເຮົາຈະໃຫ້ກິ່ນຫອມຂອງຄວາມຮັກແລະຊີວິດຂອງພຣະອົງ. ຄວາມຮັກຂອງພຣະເຈົ້າຖ້ວມລົ້ນເຂົ້າໄປໃນຊີວິດຂອງພວກທີ່ຢູ່ອ້ອມຂ້າງພວກເຮົາ.

ຂ້າພະເຈົ້າຂໍເຕືອນທ່ານກ່ຽວກັບສິ່ງທີ່ພວກເຮົາໄດ້ອ່ານກ່ອນໜ້ານີ້ໃນ 1 ໂຢຮັນ 3:13: ໂລກກຽດຊັງພວກເຮົາ. ສໍາລັບຂ້າພະເຈົ້າ, ກິ່ນຫອມຂອງພຣະຄຣິດໃນຊີວິດຂອງຜູ້ເຊື່ອແມ່ນຫວານກວ່າກິ່ນຫອມຂອງຄຸກກີ້ຊິບຊັອກໂກແລັດ! ຢ່າງໜ້າເສັຍດາຍ, ບໍ່ແມ່ນທຸກຄົນຮູ້ສຶກແບບນັ້ນ. ດັ່ງທີ່ໂປໂລໄດ້ຂຽນ, “ດ້ວຍວ່າພວກເຮົາເປັນກິ່ນອັນຫອມຫວານທີ່ພຣະຄຣິດຖວາຍແກ່ພຣະເຈົ້າ ໃນຖ້າມກາງຄົນທັງຫຼາຍທີ່ກໍາລັງຊົງໂຜດໃຫ້ພົ້ນ ແລະໃນຖ້າມກາງຄົນທັງຫຼາຍທີ່ກໍາລັງຈິບຫາຍດ້ວຍ. ຝ່າຍນຶ່ງເປັນກິ່ນຂອງຄວາມຕາຍຊຶ່ງຈະນໍາໄປສູ່ຄວາມຕາຍ ຝ່າຍນຶ່ງອີກເປັນກິ່ນຫອມຂອງຊີວິດຊຶ່ງນໍາໄປສູ່ຊີວິດ ໃຜໜໍຈະພໍສົມກັບສິ່ງທັງຫຼາຍນີ້.” (2 ໂກຣິນໂທ 2:15-16),

ຄອບຄົວຂອງຂ້າພະເຈົ້າມີກົດລະບຽບທີ່ພວກເຮົາປະຕິບັດຕາມ; ມັນແມ່ນວິທີທີ່ພວກເຮົາກໍານົດວ່າພວກເຮົາແມ່ນໃຜໃນຖານະເປັນຄອບຄົວ. ມັນມີຫ້າອົງປະກອບດ້ວຍກັນ: (1) ພວກເຮົາຮັກພຣະເຈົ້າ; (2) ພວກເຮົາຮັກຄົນອື່ນ; (3) ພວກເຮົາແບ່ງປັນສິ່ງຂອງພວກເຮົາ; (4) ພວກເຮົາກະທໍາໃຫ້ດີທີ່ສຸດ; ແລະ (5) ພວກເຮົາມີຄວາມກ້າຫານ. ພວກເຮົາໃຊ້ສິ່ງນີ້ເປັນໄມ້ວັດແທກເບິ່ງວ່າພວກເຮົາເຮັດໄດ້ດີປານໃດໃນຄອບຄົວ. ຊີວິດຄຣິສະຕຽນກໍຄືກັນມີໄມ້ວັດແທກ: ຄວາມຮັກຂອງພຣະເຈົ້າ. ຄວາມຮັກຂອງພຣະເຈົ້າແມ່ນພື້ນຖານທີ່ພວກເຮົາສ້າງຊີວິດຂອງພວກເຮົາໃຫ້ເປັນຜູ້ຕິດຕາມພຣະເຢຊູ. ຂ້າພະເຈົ້າຫວັງວ່າທ່ານຈະໄດ້ຍິນຄວາມປອດພັຍທີ່ມາກັບຄວາມຮັກຂອງພຣະເຈົ້າໃນຊີວິດຂອງພວກເຮົາ. ຄວາມຮັກຂອງພຣະອົງທີ່ໄຫຼອອກມາຈາກຊີວິດຂອງເຮົາເປັນຫຼັກຖານວ່າເຮົາຢູ່ໃນພຣະຄຣິດ. ເຮົາສາມາດພັກຜ່ອນດ້ວຍຄວາມໝັ້ນໃຈໃນຄວາມຮັກຂອງພຣະອົງ.

ທ່ານມາຮູ້ຈັກແລະເຊື່ອໃນຄວາມຮັກທີ່ພຣະເຈົ້າມີສໍາລັບທ່ານໄດ້ແນວໃດ?

## 3. 1 ໂຢຮັນ 4:17-18

*17. ໃນຂໍ້ນີ້ແຫຼະ, ຄວາມຮັກເປັນທີ່ສໍາເຣັດໃນເຮົາທັງຫຼາຍ ເພື່ອວ່າພວກເຮົາຈະໄດ້ມີຄວາມແນ່ໃຈໃນວັນພິພາກສາ ເພາະພຣະຄຣິດຊົງເປັນຢ່າງໃດ ເຮົາທັງຫຼາຍໃນໂລກກໍເປັນຢ່າງນັ້ນ. 18. ໃນຄວາມຮັກນັ້ນບໍ່ມີຄວາມຢ້ານ ແຕ່ຄວາມຮັກທີ່ສໍາເຣັດນັ້ນກໍຂັບໄລ່ຄວາມຢ້ານອອກເສັຽ ເພາະຄວາມຢ້ານກ່ຽວກັບການລົງໂທດ ແລະຜູ້ທີ່ຢ້ານກໍຍັງບໍ່ສໍາເຣັດໃນຄວາມຮັກ.*

ໂຢຮັນໄດ້ເລີ້ມຕົ້ນຂໍ້ທີ 17 ດ້ວຍ "ໃນຂໍ້ນີ້ແຫຼະ" ໂດຍການຊີ້ເຖິງຄວາມຈິງທີ່ວ່າ "ຜູ້ໃດທີ່ຕັ້ງຢູ່ໃນຄວາມຮັກກໍຢູ່ໃນພຣະເຈົ້າ ແລະພຣະເຈົ້າກໍຊົງສະຖິດຢູ່ໃນຜູ້ນັ້ນ." (1 ໂຢຮັນ 4:16). ເມື່ອພວກເຮົາມີຄວາມໝັ້ນຄົງໃນສາຍສັມພັນກັບພຣະເຈົ້ານັ້ນ, “ໃນຄວາມຮັກນັ້ນບໍ່ມີຄວາມຢ້ານ ແຕ່ຄວາມຮັກທີ່ສໍາເລັດນັ້ນກໍຂັບໄລ່ຄວາມຢ້ານອອກເສັຽ ເພາະຄວາມຢ້ານກ່ຽວກັບການລົງໂທດ.” ບໍ່ມີຫຍັງເພີ້ມເຕີມໄດ້ກັບຄວາມຮັກຂອງພຣະເຈົ້າຢູ່ໃນພວກເຮົາ; ພຣະອົງຮັກພວກເຮົາຢ່າງເຕັມສ່ວນແລະຄວາມຮັກຂອງພຣະອົງໄດ້ສໍາເລັດຢ່າງເຕັມປ່ຽມແລະສໍາເລັດໃນຫົວໃຈຂອງພວກເຮົາ. ແລະເນື່ອງຈາກວ່າຄວາມຮັກຂອງພຣະເຈົ້າແມ່ນຢູ່ໃນພວກເຮົາ, ພວກເຮົາບໍ່ມີຫຍັງແທ້ໆທີ່ຈະຢ້ານກົວກ່ຽວກັບວັນແຫ່ງການພິພາກສາ. ຄວາມຮັກຂອງພຣະອົງເຕັມໄປໃນຊີວິດຂອງພວກເຮົາດັ່ງນັ້ນບໍ່ມີຫ້ອງສໍາລັບຄວາມຢ້ານກົວ. ໃນຄວາມເປັນຈິງ, ຄວາມຢ້ານກົວແລະຄວາມຮັກແມ່ນສະເພາະກັນ.

ຄວາມຮັກຂອງພຣະເຈົ້າຊ່ວຍເຮົາເອົາຊະນະຄວາມຢ້ານກົວແນວໃດ?

ຖ້າພວກເຮົາບໍ່ມີຄວາມສໍາພັນກັບພຣະເຈົ້າໂດຍອີງໃສ່ຄວາມເຊື່ອໃນພຣະຄຣິດ, ພວກເຮົາມີສິດທີ່ຈະຢ້ານ. ມື້ນຶ່ງພວກເຮົາທຸກໆຄົນຈະ

ຢືນຢູ່ຕໍ່ໜ້າພຣະເຈົ້າ. ທະບຽນແຫ່ງຊີວິດຈະຖືກເປີດແລະຜູ້ໃດບໍ່ມີຊື່ບັນທຶກໄວ້ໃນທະບຽນແຫ່ງຊີວິດກໍຈະປະເຊີນກັບການກ່າວໂທດ, ການລົງໂທດ, ແລະຄວາມຕາຍ (ພຣະນິມິດ 20:11-15). ແຕ່ວ່າເມື່ອພວກເຮົາໄວ້ວາງໃຈໃນພຣະຄຣິດ, ການກ່າວໂທດແລະການລົງໂທດແມ່ນ ຖືກຍົກຍ້າຍອອກເພາະວ່າພຣະຄຣິດໄດ້ຮັບເອົາການລົງໂທດແລະຄວາມຕາຍຂອງພວກເຮົາຕໍ່ພຣະອົງເອງ. ພຣະເຈົ້າເຫັນພວກເຮົາໂດຍຜ່ານວຽກງານສຳເລັດຮູບຂອງພຣະຄຣິດ, ແລະພຣະອົງໄດ້ເຫັນພວກເຮົາເປັນຄົນທີ່ຖືກຊົງສ້າງຂື້ນໃໝ່, ຊົງຮັບຮູ້ຢ່າງເຕັມສ່ວນແລະເຮັດໃຫ້ເປັນຂຶ້ນໃໝ່ໂດຍຜ່ານພຣະຄຣິດ. ບໍ່ມີຫຍັງສາມາດປ່ຽນແປງວຽກງານອັນສຳເລັດຂອງພຣະຄຣິດໄດ້, ແລະດັ່ງນັ້ນ, ພວກທີ່ຕິດຕາມພຣະອົງບໍ່ຈຳເປັນຕ້ອງຢ້ານການພິພາກສາ!

ອັນນີ້ນຳພວກເຮົາກັບຄືນໄປສູ່ຫົວໃຈຂອງການສຶກສາພຣະຄັມພີຂອງພວກເຮົາທີ່ຜ່ານມາໃນ ໂຣມ ບົດ 8. ໃນຂໍ້ພຣະຄຳເຫຼົ່ານັ້ນ, ພວກເຮົາໄດ້ເຫັນວ່າບໍ່ມີຫຍັງສາມາດແຍກພວກເຮົາອອກຈາກພຣະເຈົ້າເພາະວຽກງານຂອງພຣະຄຣິດ. ຄວາມຮັກທີ່ເຮັດໃຫ້ພວກເຮົາເຂົ້າໄປໃນຄວາມລອດພົ້ນແລະຄວາມປອດພັຍໃນພຣະອົງເປັນຄວາມຮັກດຽວກັນທີ່ປະຈຸບັນສະຖິດຢູ່ຂອງພຣະອົງໃນຜູ້ຕິດຕາມແລະກຳຈັດຄວາມຢ້ານກົວ. ພວກເຮົາສາມາດກ້າວເດີນໄປຢ່າງໝັ້ນໃຈໄດ້ເພາະວ່າພວກເຮົາໄດ້ມີປະສົບການກັບຄວາມຮັກຂອງພຣະຄຣິດ. ພວກເຮົາສາມາດຮັກດ້ວຍຄວາມໝັ້ນໃຈເພາະພຣະຄຣິດຊົງສະຖິດຢູ່ໃນພວກເຮົາ. ພວກເຮົາສາມາດຮັກຢ່າງເຕັມສ່ວນແລະຢ່າງຄົບຖ້ວນເພາະວ່ານັ້ນຄືວິທີທີ່ພຣະຄຣິດໄດ້ຊົງຮັກພວກເຮົາ. ເມື່ອທັງໝົດເຫຼົ່ານີ້, ໃຫ້ມັນກ່າວກັບເຮົາວ່າພວກເຮົາມີຄວາມຮັກດັ່ງທີ່ພຣະເຢຊູໄດ້ຮັກ.

ເຈົ້າຮູ້ຜູ້ໃຜມາໃກ້ທີ່ສຸດກັບການດຳເນີນຊີວິດທີ່ມີຄວາມຮັກແລະຊີວິດຄຣິສຕຽນທີ່ບໍ່ມີຄວາມຢ້ານກົວ?

## ນຳໃຊ້ໃນຊີວິດ

ບໍ່ມີຫ້ອງສຳລັບຄວາມຢ້ານກົວໃນເວລາທີ່ຄວາມຮັກຂອງພຣະເຈົ້າຢູ່ໃນພວກເຮົາ. ແມ່ນຫຍັງມັນເບິ່ງຄືວ່າຈະພັກຜ່ອນໃນຄວາມຮັກຂອງພຣະເຈົ້າໄດ້, ປາສຈາກຄວາມຢ້ານກົວແລະການຮັກດັ່ງທີ່ພຣະເຢຊູຮັກ? ເລືອກນຶ່ງໃນການນຳໃຊ້ຕໍ່ໄປນີ້:

- **ບັນທຶກ**. ສ້າງບັນຊີລາຍຊື່ຂອງວິທີການທັງໝົດທີ່ທ່ານຮູ້ວ່າທ່ານຖືກຮັກໂດຍພຣະຄຣິດ. ປ່ຽນລາຍຊື່ນັ້ນໃຫ້ເປັນຄຳອະທິຖານ, ຂອບຄຸນພຣະເຈົ້າສຳລັບຄວາມຮັກອັນອັສຈັນຂອງພຣະອົງ.
- **ຮັບໃຊ້**. ຊອກຫາວິທີທີ່ເຫັນໄດ້ຊັດເຈນເພື່ອສະແດງຄວາມຮັກຕໍ່ບາງຄົນໃນຊີວິດຂອງທ່ານ. ກຳນົດຄວາມຕ້ອງການຫຼືວິທີການທີ່ທ່ານສາມາດຊ່ວຍແຕ່ລະບຸກຄົນ. ນີ້ອາດຈະເປັນການແຈກອາຫານຫຼືຝາກຂໍ້ຄວາມໃຫ້ຄົນນັ້ນເພື່ອເປັນຄຳໜູນໃຈ.
- **ຮັກ,** ກຳນົດຄົນທີ່ທ່ານຍາກທີ່ຈະຮັກ. ເຮັດບາງສິ່ງບາງຢ່າງໂດຍເຈດຕະນາທີ່ສະທ້ອນເຖິງວິທີທີ່ພຣະຄຣິດໄດ້ຮັກທ່ານ. ມັນແມ່ນຄວາມຄ້າຍຄືກັບພຣະຄຣິດແທ້ໆທີ່ຈະຮັກສັດຕູຫຼືຜູ້ທີ່ສ້າງຄວາມລຳຄານຫຼືກວນປະສາດຂອງທ່ານ, ຫຼັງຈາກນັ້ນ, ໃຫ້ຂຽນສິ່ງທີ່ທ່ານໄດ້ຮຽນຮູ້ແລະມັນເປີດເຜີຍຕໍ່ທ່ານກ່ຽວກັບພຣະຄຣິດ. ໃຊ້ຕົວຢ່າງນີ້ໃຫ້ເປັນຄຳພະຍານແກ່ຄົນອື່ນ,

ຄືກັນກັບວ່າພວກເຮົາບໍ່ມີຊ່ອງຫວ່າງສຳລັບສິ່ງອື່ນໃດໃນວັນຂອບພຣະຄຸນນັ້ນ, ພວກເຮົາສາມາດເຕັມລົ້ນໃນຄວາມພໍໃຈກັບຄວາມຮັກຂອງພຣະຄຣິດ. ໃນການຊອກຫາຄວາມພໍໃຈຂອງພວກເຮົາໃນພຣະຄຣິດ, ແນ່ນອນວ່າບໍ່ມີຫ້ອງປະໄວ້ສຳລັບຄວາມຢ້ານກົວ. ໂດຍພຣະຄຸນຂອງພຣະເຈົ້າ, ພວກເຮົາມີຄວາມໝັ້ນຄົງໃນພຣະອົງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PA**